# ມິຊຊາອາທິດທີ 27 ການົດທຳມະດາ ປີ B

# ວັນອາທິດທີ 07 ຕຸລາ 2018



**ພຣະວໍລະສານໂດຍນັກບຸນມາກໂກ 10, 2-16**

ໃນເວລານັ້ນ, ພວກຟາຣິເຊວລາງຄົນພາກັນມາຫາພຣະເຢຊູເຈົ້າເພື່ອຈັບຜິດພຣະອົງ. ພວກເຂົາທູນຖາມພຣະອົງວ່າ: ມີອະນຸຍາດໃຫ້ສາມີຢ່າຮ້າງກັບພັນລະຍາຂອງຕົນບໍ? ພຣະອົງຕອບວ່າ: ໂມແຊໄດ້ສັ່ງບອກພວກເຈົ້າແນວໃດ? ພວກເຂົາທູນວ່າ: ໂມແຊໄດ້ອະນຸຍາດໃຫ້ທຳໜັງສືຢ່າຮ້າງກັນໄດ້. ພຣະເຢຊູເຈົ້າກ່າວຄ້ານວ່າ: ໂມແຊໄດ້ຕັ້ງກົດນີ້ຂຶ້ນມາກໍຍ້ອນພວກເຈົ້າມີຈິດໃຈແຂງກະດ້າງນັ້ນແລ້ວ. ແຕ່ຕົ້ນສ້າງໂລກ, ເມື່ອພຣະເປັນເຈົ້າສ້າງມະນຸດມາ ພຣະອົງໄດ້ສ້າງຊາຍແລະຍິງ. ດ້ວຍເຫດນີ້ ຜູ້ຊາຍຈະປະພໍ່ແມ່ໄປຢູ່ກິນກັບພັນລະຍາຂອງຕົນແລະທັງສອງຈະເປັນເນື້ອໜຶ່ງໜັງດຽວ. ທັງນີ້ບໍ່ແມ່ນສອງຄົນອີກຕໍ່ໄປແຕ່ເປັນເນື້ອໜຶ່ງໜັງດຽວ. ດັ່ງນີ້, ມະນຸດຢ່າໄດ້ແບ່ງແຍກສິ່ງທີ່ພຣະເປັນເຈົ້າໄດ້ຮວມໄວ້ແລ້ວ.

ເມື່ອຫລົບເມືອຮອດເຮືອນ, ພວກສາວົກທູນຖາມພຣະອົງອີກກ່ຽວກັບເລື່ອງນີ້. ພຣະອົງກ່າວຕອບພວກເຂົາວ່າ: ຜູ້ໃດປະຮ້າງກັບພັນລະຍາຂອງຕົນແລະໄປແຕ່ງງານໃໝ່ກໍຜິດປະເວນີຕໍ່ພັນລະຍາຄົນກ່ອນ. ຖ້າຍິງຜູ້ໃດປະຮ້າງກັບສາມີຂອງຕົນແລະໄປແຕ່ງງານໃໝ່ກໍຜິດປະເວນີເໝືອນກັນ.

ແລ້ວເຂົາໄດ້ເອົາເດັກນ້ອຍໆມາຫາພຣະເຢຊູເຈົ້າ ເພື່ອຂໍໃຫ້ພຣະອົງລູບໂຊມເຂົາ ແຕ່ພວກລູກສິດຂັດຂວາງໄວ້. ເມື່ອເຫັນດັ່ງນັ້ນ, ພຣະເຢຊູເຈົ້າຈຶ່ງກ່າວຕິຮ້າຍພວກລູກສິດວ່າ: ຈົ່ງປະໃຫ້ພວກເດັກນ້ອຍມາຫາເຮົາ, ຢ່າຫ້າມເຂົາ. ຍ້ອນວ່າອານາຈັກຂອງພຣະເຈົ້າເປັນຂອງຜູ້ທີ່ມີໃຈເປັນເໝືອນເດັກເຫລົ່ານີ້.

ເຮົາບອກພວກເຈົ້າເປັນຄວາມຈິງວ່າ: ຜູ້ໃດບໍ່ຕ້ອນຮັບອານາຈັກຂອງພຣະເຈົ້າຄືກັບເດັກນ້ອຍແລ້ວ ກໍຈະເຂົ້າໃນອານາຈັກຂອງພຣະເຈົ້າບໍ່ໄດ້. ແລ້ວພຣະອົງຊົງອຸ້ມແລະອວຍພອນໃຫ້ເດັກນ້ອຍເຫລົ່ານັ້ນດ້ວຍການປົກມືເທິງເຂົາ.

*ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ*

**ບົດແບ່ງປັນ: ມກ 10, 2-16**

ເມື່ອຟັງພຣະວໍລະສານຕອນນີ້, ຫລາຍຄົນກໍຄິດວ່າຜູ້ນິພົນພຣະວໍລະສານຢາກບອກສອນເຖິງຄວາມຊື່ສັດແລະຄວາມຮັກແພງໃນຊີວິດຄອບຄົວ. ເພາະຜູ້ໃດຢ່າຮ້າງພັນລະຍາຫລືສາມີຂອງຕົນແລ້ວໄປແຕ່ງງານຢູ່ກິນກັບຄົນອື່ນ ຜູ້ນັ້ນກໍຜິດປະເວນີ ຄືຜິດຕໍ່ພຣະທຳບັນຍັດຂອງພຣະເຈົ້າ.

ແຕ່ຖ້າພວກເຮົາເບິ່ງເລິກລົງໄປອີກ ກໍຈະເຫັນວ່າຄຳສອນຂອງພຣະເຢຊູເຈົ້າໃນພຣະວໍລະສານຕອນນີ້ບໍ່ໄດ້ຢຸດຢູ່ແຕ່ຊີວິດຄອບຄົວເທົ່ານັ້ນ ແຕ່ພຣະອົງຍັງຢາກບອກສອນພວກເຮົາໃຫ້ຮູ້ຈັກຕ້ອນຮັບເອົາສິ່ງສ້າງທີ່ພຣະອົງສ້າງມານັ້ນດັ່ງພຣະຄຸນສຳລັບພວກເຮົາແຕ່ລະຄົນບໍ່ວ່າຍິງຫລືຊາຍ. ເພາະສາເຫດຂອງການຢ່າຮ້າງໃນຊີວິດຄອບຄົວມາຈາກການເຫັນແກ່ຕົວແລະບໍ່ຍອມຮັບກັນແລະກັນ. ຝ່າຍສາມີບໍ່ຍອມຮັບພັນລະຍາຂອງຕົນເໝືອນດັ່ງຂອງຂັວນທີ່ພຣະເຈົ້າມອບໃຫ້ໃນຊີວິດຂອງເຂົາ. ເພາະຖ້າເຂົາຮັບແລະຮັກພັນລະຍາຂອງເຂົາດັ່ງພຣະທັນສະທານທີ່ພຣະເຈົ້າປະທານໃຫ້, ເຂົາກໍຕ້ອງຮັບທັງສິ່ງດີແລະຂໍ້ບົກຜ່ອງຂອງພັນລະຍາຂອງເຂົາເຊັ່ນດຽວກັນ. ຜູ້ເປັນພັນລະຍາກໍເໝືອນກັນ, ຖ້າເຂົາຮັບແລະຮັກສາມີຂອງເຂົາທັງຈຸດດີແລະຈຸດອ່ອນໃນຊີວິດເໝືອນດັ່ງພຣະຄຸນທີ່ພຣະເຈົ້າປະທານໃຫ້, ກໍຈະບໍ່ມີການແຕກແຍກແລະຢ່າຮ້າງກັນ.

ຜູ້ທີ່ສາມາດຮັບເອົາຄົນອື່ນເຂົ້າມາໃນຊີວິດຂອງຕົນດັ່ງພຣະທັນສະທານຂອງພຣະເຈົ້ານັ້ນ ຕ້ອງເປັນຜູ້ທີ່ມີຈິດໃຈລຽບງ່າຍແລະສຸພາບເໝືອນດັ່ງເດັກນ້ອຍ. ເພາະເດັກນ້ອຍເປັນຄົນທີ່ຮູ້ຈັກເຖິງຂອບເຂດຈຳກັດຂອງຕົນແລະຕ້ອງການຄວາມຊ່ວຍເຫລືອຈາກຄົນອື່ນຢູ່ສະເໝີ.

ພວກເຮົາຜູ້ເຊື່ອໃນພຣະເຈົ້າກໍເຊັ່ນດຽວກັນ, ຖ້າພວກເຮົາຮູ້ຈັກເຖິງຄວາມອ່ອນແອແລະຈຸດບົກຜ່ອງຂອງຕົນ ແລະພ້ອມທີ່ຈະຮັບຟັງວາຈາຄຳບອກສອນຂອງພຣະເຈົ້າເພື່ອປັບປຸງແກ້ໄຂ ພວກເຮົາກໍຈະສາມາດເຂົ້າໃນອານາຈັກຂອງພຣະເຈົ້າເໝືອນກັບເດັກນ້ອຍທີ່ພຣະເຢຊູເຈົ້າກ່າວໃນວັນນີ້.

ວາຈາຂອງພຣະເຈົ້າໃນວັນນີ້ຈຶ່ງຊ່ວຍພວກເຮົາໃຫ້ຮູ້ຈັກຮັກແພງແລະຍອມຮັບຄົນອື່ນໃນສິ່ງທີ່ເຂົາເປັນ. ເໝືອນກັບຄົນອື່ນທີ່ຍອມຮັບແລະຮັກແພງພວກເຮົາເຊັ່ນດຽວກັນ, ເຖິງວ່າພວກເຮົາຈະເປັນຢ່າງໃດກໍຕາມ ພວກເຮົາກໍລ້ວນແຕ່ຖືກສ້າງມາຈາກພຣະເຈົ້າດ້ວຍຄວາມຮັກຕາມຮູບແບບຂອງພຣະອົງ. ເພື່ອພວກເຮົາຈະໄດ້ອຸ້ມຊູຊ່ວຍເຫລືອເຊິ່ງກັນແລະກັນໃນຊີວິດນີ້ ແລະວັນໜຶ່ງກໍຈະໄດ້ພ້ອມກັນເຂົ້າສູ່ດິນສັນຍາທີ່ພຣະເຈົ້າໄດ້ຈັດຕຽມໄວ້ໃຫ້ພວກເຮົາທຸກຄົນ ອັນແມ່ນອານາຈັກສະຫວັນນັ້ນເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ